ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງວຽງຈັນ

ຄະນະໂຄສະນາອົບຮົມແຂວງ

ເລກທີ 47../ ຄອຮ ຂຈ.

ວຽງຈັນ,ວັນທີ 4...ມີນາ...2024...

**ຄຳແນະນຳ**

**ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ**

**ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ເພື່ອກະກຽມດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ ສຳລັບປະຊາຊົນ ແລະ ຊັ້ນຄົນຕ່າງໆ ແບບຄຳຖາມ-ຄຳຕອບ.**

ເຖິງ: ຄະນະບໍລິຫານງານພັກເມືອງ 11 ເມືອງທົ່ວແຂວງວຽງຈັນ.

ເລື່ອງ: ການນຳໃຊ້ເອກະສານ ແລະ ຈັດຕັ້ງສຶກສາອົບຮົມການເມືອງ-ແນວຄິດ ເພື່ອດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກໃຫ້ແກ່ປະຊາຊົນຊັ້ນຄົນຕ່າງໆ ຢູ່ບັນດາເມືອງ.

- ອີງຕາມ ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411 / ຄລສພ, ລົງວັນທີ 8 ສິງຫາ 2023 ວ່າດ້ວຍ ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມ ຄຳແນະນຳ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211/ ຄຈສພ, ລົງວັນທີ 16 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມ ຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 74/ຄອສພ, ລົງວັນທີ 13 ກຸມພາ 2024 ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ເພື່ອດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ສຳລັບສະມາຊິກພັກ, ພະນັກງານຮາກຖານ ແລະ ປະຊາຊົນຊັ້ນຄົນຕ່າງໆ ແບບຄຳຖາມ-ຄຳຕອບ.

ເພື່ອເປັນການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານຕະຫຼອດຮອດປະຊາຊົນຊັ້ນຄົນຕ່າງໆ ຮັບຮູ້, ເຂົ້າໃຈກ່ຽວກັບເນື້ອໃນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ, ທັງປຸກລະດົມໃຫ້ທົ່ວສັງຄົມເຂົ້າຮ່ວມປົກປັກຮັກສາປະເທດຊາດ ແລະ ພັດທະນາທ້ອງຖິ່ນ, ຂະແໜງການຂອງຕົນໃຫ້ເປັນຂະບວນການກ້ວາງຂວາງຟົດຟື້ນຕໍ່ເນື່ອງ, ຜ່ານຂະບວນການດັ່ງກ່າວສ້າງໄດ້ກົມກອງ, ບຸກຄົນດີເດັ່ນໃນທຸກຂົງເຂດວຽກງານ.

ຄະນະໂຄສະນາອົບຮົມແຂວງວຽງຈັນ ອອກຄຳແນະນຳ ການນຳໃຊ້ເອກະສານທີ່ເປັນຄຳຖາມ-ຄຳຕອບ ກ່ຽວກັບກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ເພື່ອສຶກສາອົບຮົມການເມືອງ-ແນວຄິດ ໃຫ້ປະຊາຊົນຊັ້ນຄົນຕ່າງໆ ໃນທົ່ວເມືອງດັ່ງນີ້:

**I. ຈຸດປະສົງລະດັບຄາດໝາຍ.**

ເພື່ອສຶກສາອົບຮົມການເມືອງ-ແນວຄິດ ໃຫ້ປະຊາຊົນບັນດາເຜົ່າ ທຸກຊັ້ນຄົນ ໃນທົ່ວແຂວງວຽງຈັນ ຮັບຮູ້, ເຂົ້າໃຈ, ມີຄວາມເປັນເອກະພາບ ແລະ ກຳແໜ້ນເນື້ອໃນຄວາມສຳຄັນໃນການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ, ຍົກສູງບົດບາດການນຳພາຂອງພັກ ເຂົ້າໃນວຽກງານຕ່າງໆ ສ້າງການຫັນປ່ຽນທັດ ສະນະຄວາມຮັບຮູ້, ແນວຄິດ, ການກະທຳ, ສົ່ງເສີມດ້ານດີ, ແກ້ໄຂຂໍ້ບົກພ່ອງ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ ເພື່ອແນໃສ່ຍູ້ແຮງການຈັດຕັ້ງຜັນຂະຫຍາຍ ເຂົ້າສູ່ການປະຕິບັດຕົວຈິງ ໃຫ້ກາຍເປັນຂະບວນການອັນກ້ວາງຂວາງ.

ເພື່ອສຶກສາອົບຮົມປະຊາຊົນບັນດາເຜົ່າ ໃຫ້ມີຄວາມເດັດດ່ຽວໜຽວແໜ້ນ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆ ມີສະຕິລະວັງຕົວຕໍ່ກົນອຸບາຍມ້າງເພທຳລາຍຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ ແລະ ການເສື່ອມຖອຍທາງດ້ານຄຸນທາດການເມືອງ, ແບບແຜນການດຳລົງຊີວິດ, ຮັບປະກັນໃນການປົກປັກຮັກສາ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນພັກ ແລະ ສັງຄົມໃຫ້ແໜ້ນໜາຍິ່ງຂຶ້ນ.

ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວນັ້ນ ເຮັດໃຫ້ປະຊາຊົນຊັ້ນຄົນຕ່າງໆ ມີຄວາມເຂັ້ມແຂງ, ໜັກແໜ້ນ ກາຍເປັນກຳລັງແຮງອັນແຂງແກ່ນແໜ້ນໜາ ແລະ ມີສ່ວນຮ່ວມເຂົ້າໃນການປົກປັກຮັກສາ, ພັດທະນາປະເທດຊາດ, ເປັນເຈົ້າການອຸທິດສະຕິປັນຍາ ແລະ ເຫື່ອແຮງເຂົ້າໃນພາລະກິດ, ເຮັດໃຫ້ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**II. ເນື້ອໃນ.**

ນຳໃຊ້ເນື້ອໃນເອກະສານແບບຄຳຖາມ-ຄຳຕອບ ສຶກສາອົບຮົມການເມືອງ-ແນວຄິດ ສຳລັບປະຊາຊົນຊັ້ນຄົນຕ່າງໆ ເພື່ອຮັບຮູ້, ເຂົ້າໃຈກ່ຽວກັບການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ຊຶ່ງປະກອບມີ 20 ຄຳຖາມ-ຄຳຕອບ.

**III. ເປົ້າໝາຍເຂົ້າຮ່ວມ.**

ເລຂາ, ຮອງເລຂາໜ່ວຍພັກບ້ານ, ແນວໂຮມບ້ານ, ປກຊ-ປກສ, ອົງການຈັດຕັ້ງມະຫາຊົນຂັ້ນບ້ານ ແລະ ປະຊາຊົນບັນດາເຜົ່າທຸກຊັ້ນຕ່າງໆ ທີ່ມີອາຍຸຕັ້ງແຕ່ 18 ປີ ຂຶ້ນໄປ.

**IV. ວິທີຈັດຕັ້ງປະຕິບັດ.**

1. ໃຫ້ຄະນະບໍລິຫານງານພັກເມືອງ ນຳເອົາເອກະສານນີ້ ຈັດຕັ້ງສຶກສາອົບຮົມປະຊາຊົນຊັ້ນຄົນຕ່າງໆ ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເລິກເຊິ່ງ ໂດຍອີງໃສ່ສະພາບຕົວຈິງຂອງແຕ່ລະບ່ອນ.

2. ຫຼັງຈາກມີການຈັດຕັ້ງຝຶກອົບຮົມແລ້ວ, ໃນແຕ່ລະມື້ ແມ່ນມອບໃຫ້ນາຍບ້ານ, ຄະນະບ້ານ ນຳເອົາເນື້ອໃນດັ່ງກ່າວ ( 20 ຄຳຖາມ-ຄຳຕອບ ) ເວົ້າຜ່ານໂທລະໂຄ່ງຂອງບ້ານ, ຄັດຈ້ອນເອົາເນື້ອໃນຂໍ້ສຳຄັນ ຂຶ້ນມາເວົ້າປະກາດເປັນປະຈຳ ເພື່ອໃຫ້ປະຊາຊົນຮັບຮູ້-ເຂົ້າໃຈ.

3. ກຳນົດເວລາຮຽນເອກະສານ 1 ວັນ, ສຳລັບຜູ້ທີ່ບັນຍາຍເອກະສານນີ້ ຕ້ອງແມ່ນສະຫາຍຄະນະບໍລິຫານງານພັກເມືອງ, ຜູ້ຊີ້ນຳກຸ່ມບ້ານ ເປັນຜູ້ຮັບຜິດຊອບບັນຍາຍໂດຍກົງ.

ມອບໃຫ້ ຄະນະໂຄສະນາອົບຮົມເມືອງ ເປັນເສນາທິການໃຫ້ແກ່ຄະນະພັກຂອງຕົນ ເພື່ອຈັດຕັ້ງປະຕິບັດການສຶກສາອົບຮົມເອກະສານນີ້ຕາມພາລະບົດບາດຂອງຕົນ.

4. ພາຍຫຼັງ ຈັດຕັ້ງຮ່ຳຮຽນ ສຶກສາອົບຮົມສຳເລັດແລ້ວ ໃຫ້ລາຍງານໄປຍັງຄະນະໂຄສະນາອົບຮົມແຂວງ ຮັບຊາບ ເພື່ອຈະສັງລວມ ແລະ ສະຫຼຸບລາຍງານ ໃຫ້ຄະນະປະຈຳພັກແຂວງ, ຄະນະໂຄສະນາອົບຮົມສູນກາງພັກ ຢ່າງເປັນທາງການ.

ຫົວໜ້າຄະນະ

ຄະນະບໍລິຫານງານພັກແຂວງ ... ຄະນະໂຄສະນາອົບຮົມແຂວງ

ສີທົນ ແສງພະຈັນ